ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 553 /ລບ
ນະຄອນຫຼວງວຽງຈັນ, ວັນທີ 04 / 09 / 25

# ດຳລັດ
# ວ່າດ້ວຍ ການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ໜັງສືສະເໜີຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 169/ທຫລ, ລົງວັນທີ 22 ສິງຫາ 2025.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ລະບົບເສດຖະກິດ-ການເງິນ ມີຄວາມເຂັ້ມແຂງ, ຄວາມໝັ້ນຄົງ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ມາດຕະການທາງບໍລິຫານ ທີ່ນຳໃຊ້ຕໍ່ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ກໍ່ການຮ້າຍ ເພື່ອ ສະກັດກັ້ນ, ຈຳກັດ ແລະ ປາບປາມ ການເຄື່ອນໄຫວ, ພຶດຕິກຳ ຫຼື ການກະທຳ ດັ່ງກ່າວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບັນຊີລາຍຊື່ ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** ໝາຍເຖິງ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ແລະ ບັນຊີລາຍຊື່ພາຍໃນປະເທດ;

2. **ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ** ໝາຍເຖິງ ລາຍຊື່ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ກໍ່ການຮ້າຍ ທີ່ກຳນົດໃນບັນຊີ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຕາມຍັດຕິ 1267 (ປີ 1999), 1988 (ປີ 2011), 1989 (ປີ 2011), 2253 (ປີ 2015) ແລະ ຍັດຕິອື່ນ ທີ່ກ່ຽວຂ້ອງ;

3. **ບັນຊີລາຍຊື່ພາຍໃນປະເທດ** ໝາຍເຖິງ ລາຍຊື່ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ມີການເຄື່ອນໄຫວ ຫຼື ການກະທຳ ດ້ວຍວິທີການຕ່າງໆ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມການກຳນົດ ຂອງ ສປປ ລາວ;

4. **ທຶນ ທີ່ຕ້ອງ ກັກ, ຍຶດ ແລະ ອາຍັດ** ໝາຍເຖິງ ທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຊັບສິນອື່ນ ທີ່ເປັນກຳມະສິດ, ຢູ່ໃນການຄອບຄອງ ຫຼື ການຄວບຄຸມ ທາງກົງ ຫຼື ທາງອ້ອມ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຂອງຜູ້ຖືກກຳນົດໃນບັນຊີທີ່ພົວພັນກັບຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ຜູ້ທີ່ຖືກຳມະສິດແທນ ຫຼື ທຶນ ທີ່ຢູ່ພາຍໃຕ້ການຄວບຄຸມບັນຊາຂອງຜູ້ທີ່ຖືກກຳນົດຢູ່ໃນບັນຊີລາຍຊື່ຜູ້ທີ່ພົວພັນກັບຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫຼື ທຶນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຜູ້ທີ່ ສະໜອງ ຫຼື ພະຍາຍາມ ສະໜອງໃຫ້ແກ່ການກໍ່ການຮ້າຍ ລວມທັງທຶນ ທີ່ໄດ້ມາຈາກການກະທຳທີ່ເປັນການກໍ່ການຮ້າຍ;

5. **ທຸລະກຳ** ໝາຍເຖິງ ທຸກກິດຈະກຳ ທີ່ມີການເຄື່ອນໄຫວທາງການເງິນ ໃຫ້ແກ່ລູກຄ້າຂອງຕົນ ເປັນຕົ້ນ ການຊື້ ຂາຍ ຫຼື ການຊຳລະຄ່າບໍລິການ, ການຝາກ, ການຖອນ, ການສັ່ງຈ່າຍ ຫຼື ການໂອນ ທີ່ກ່ຽວຂ້ອງກັບການບໍລິການດ້ານ ທະນາຄານ, ສະຖາບັນການເງິນຈຸລະພາກ, ປະກັນໄພ, ຫຼັກຊັບ, ວັດຖຸມີຄ່າ, ຊັບສິນເໝືອນຈິງ ລວມທັງ ການໃຫ້ບໍລິການລູກຄ້າ ເປັນຕົ້ນ ວິສາຫະກິດໄປສະນີ, ວິສາຫະກິດບັນຊີ, ວິສາຫະກິດກວດສອບ, ວິສາຫະກິດກົດໝາຍ, ທະນາຍຄວາມ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ຜູ້ໃຫ້ບໍລິການຊຳລະເງິນ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນ, ທຸລະກິດ ຊື້ ຂາຍ ອະສັງຫາລິມະຊັບ, ທຸລະກິດກາຊີໂນ;

6. **ການຍຶດ** ໝາຍເຖິງ ການເອົາທຶນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມາໄວ້ ຕາມຄຳສັ່ງຂອງເຈົ້າ ໜ້າທີ່ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ;

7. **ການອາຍັດ** ໝາຍເຖິງ ການບໍ່ອະນຸຍາດໃຫ້ ຊື້ ຂາຍ, ມອບ, ໂອນ, ແລກປ່ຽນ, ຈຳນຳ, ຈຳນອງ, ຄ້ຳປະກັນ, ຕໍ່ເຕີມ, ທຳລາຍ ຫຼື ປ່ຽນແປງ, ເຄື່ອນຍ້າຍ ຫຼື ເຄື່ອນໄຫວ ທຶນ ທີ່ເປັນ ຊັບເຄື່ອນທີ່ ຫຼື ຊັບຄົງທີ່ ຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມຄຳສັ່ງຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ;

8. **ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** ໝາຍເຖິງ ການຈັດຕັ້ງບໍ່ປະຈຳການ ຊຶ່ງຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ປະກອບດ້ວຍ ຮອງນາຍົກລັດຖະມົນຕີ ເປັນປະທານ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຮອງປະທານ ທັງເປັນຜູ້ປະຈຳການ, ຮອງລັດຖະມົນຕີ ຫຼື ຮອງຫົວໜ້າອົງການ ທີ່ກ່ຽວຂ້ອງ ເປັນຮອງປະທານ ແລະ ກຳມະການ ໂດຍມີ ສຳນັກງານຂໍ້ມູນຕ້ານການຟອກເງິນ ຂຽນຫຍໍ້ວ່າ "ສຕຟງ" ເປັນກົງຈັກຊ່ວຍວຽກ. ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂຽນຫຍໍ້ວ່າ "ຄຕຟງ".

### ມາດຕາ 4 ຫຼັກການ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການເຄື່ອນໄຫວວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ຮັບປະກັນ ຄວາມສະຫງົບ ແລະ ຄວາມໝັ້ນຄົງຂອງຊາດ;

3. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;

4. ຮັບປະກັນຄວາມ ວ່ອງໄວ, ຊັດເຈນ, ພາວະວິໄສ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ການປົກປ້ອງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ລວມທັງ ຜູ້ເຂົ້າຮ່ວມອື່ນ ໃນການເຄື່ອນໄຫວວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ຄະນະອຳນວຍການ, ຜູ້ຈັດການ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ, ຜູ້ລາຍງານ, ຜູ້ສະໜອງຂໍ້ມູນຂ່າວສານ, ພະຍານ, ຜູ້ຊ່ຽວຊານ ທີ່ປະຕິບັດໜ້າທີ່ ດ້ວຍຄວາມບໍລິສຸດໃຈ ລວມທັງ ຄອບຄົວຂອງພວກກ່ຽວ ຈະໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການຮ້ອງຟ້ອງທາງແພ່ງ ແລະ ອາຍາ, ການແກ້ແຄ້ນ, ຂົ່ມຂູ່ຕໍ່ ຊີວິດ, ສຸຂະພາບ, ອິດສະລະພາບ ແລະ ການສ້າງຄວາມເສຍຫາຍຕໍ່ ກຽດສັກສີ, ຊື່ສຽງ ຫຼື ຊັບສິນສ່ວນຕົວ.

ທຶນ, ຊັບສິນ ສິດ ແລະ ຜົນປະໂຫຍດ ຂອງບຸກຄົນທີສາມ ທີ່ບໍລິສຸດໃຈ ໄດ້ຮັບການເຄົາລົບ ແລະ ການປົກປ້ອງ ຕາມກົດໝາຍ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢູ່ ສປປ ລາວ.

## ໝວດທີ 2
## ການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 7 ການ ລະງັບ ຫຼື ກັກ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ຕ້ອງກວດກາລູກຄ້າຂອງຕົນ ຢ່າງເປັນປະຈຳ ກ່ຽວກັບການເຄື່ອນໄຫວທຸລະກຳ ຫຼື ການໃຫ້ບໍລິການລູກຄ້າ ທີ່ ສຳເລັດ ຫຼື ພະຍາຍາມເຮັດ ແຕ່ບໍ່ສຳເລັດ.

ໃນການກວດກາລູກຄ້າ ຂອງວິສາຫະກິດໄປສະນີ ສາມາດກວດກາເຄື່ອງຝາກໄປສະນີ ທີ່ສົງໄສວ່າພົວພັນກັບຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ໃນກໍລະນີ ການພະຍາຍາມເຮັດທຸລະກຳ ແຕ່ບໍ່ສຳເລັດ ຫາກກວດພົບ ຫຼື ພົບເຫັນ ທຶນ ພົວພັນ ຫຼື ເປັນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ຕ້ອງລະງັບການເຮັດທຸລະກຳ ໂດຍບໍ່ແຈ້ງເຕືອນລູກຄ້າລ່ວງໜ້າ ພ້ອມທັງລາຍງານໃຫ້ ກະຊວງປ້ອງກັນຄວາມສະຫງົບ ແລະ ສຕຟງ ທັນທີທັນໃດ.

ໃນກໍລະນີ ການໃຫ້ບໍລິການທີ່ສຳເລັດ ຫາກກວດພົບ ຫຼື ພົບເຫັນ ທຶນ ທີ່ພົວພັນ ຫຼື ເປັນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ຕ້ອງກັກທຶນ ເພື່ອບໍ່ໃຫ້ມີການເຄື່ອນໄຫວ ໂດຍບໍ່ແຈ້ງເຕືອນລູກຄ້າລ່ວງໜ້າ ພ້ອມທັງລາຍງານໃຫ້ ກະຊວງປ້ອງກັນຄວາມສະຫງົບ ແລະ ສຕຟງ ທັນທີທັນໃດ.

**ມາດຕາ 8 ການ ຍຶດ ແລະ ອາຍັດ**

ພາຍຫຼັງໄດ້ຮັບການລາຍງານ ຈາກຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ກະຊວງປ້ອງກັນຄວາມສະຫງົບ ຕ້ອງດຳເນີນການອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທັນທີທັນໃດ.

ທຶນ ທີ່ຖືກ ຍຶດ ແລະ ອາຍັດ ນັ້ນ ຍັງຕ້ອງຖືກຮັກສາໄວ້ ຈົນກ່ວາຈະມີການຍົກເລີກ ຄຳສັ່ງຍຶດ ແລະ ອາຍັດ ຫຼື ໄດ້ຮັບການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດສະບັບນີ້.

**ມາດຕາ 9 ການດຳເນີນການພາຍຫຼັງ ການ ຍຶດ ຫຼື ອາຍັດ ທຶນ**

ພາຍຫຼັງອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ກະຊວງປ້ອງກັນຄວາມສະຫງົບ ຕ້ອງດຳເນີນການ ເກັບກຳ ຂໍ້ມູນ ຫຼັກຖານ ເພື່ອພິສູດວ່າ ຜູ້ຖືກສົງໄສ ແລະ ທຶນ ດັ່ງກ່າວ ພົວພັນ ຫຼື ບໍ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ສຳເລັດ ພາຍໃນ ສາມສິບວັນ; ຖ້າການ ເກັບກຳ ຂໍ້ມູນ ຫຼັກຖານ ຫາກພົວພັນກັບຫຼາຍພາກສ່ວນ ຫຼື ມີຄວາມຫຍຸ້ງຍາກສັບສົນນັ້ນ ສາມາດຕໍ່ກຳນົດເວລາການເກັບກຳຂໍ້ມູນໄດ້ຕື່ມອີກ ສາມສິບວັນ; ກໍລະນີຕ້ອງໄດ້ ເກັບກຳຂໍ້ມູນ ຫຼັກຖານ ຢູ່ຕ່າງປະເທດ ຕ້ອງດຳເນີນໃຫ້ສຳເລັດ ພາຍໃນ ເກົ້າສິບວັນ.

ກໍລະນີ ພິສູດໄດ້ວ່າ ທຶນດັ່ງກ່າວ ຫາກບໍ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຄຕຝງ ຫຼື ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຖອນຊື່ຜູ້ເປັນເຈົ້າຂອງທຶນ ອອກຈາກບັນຊີລາຍຊື່ ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄຳສັ່ງ ຍຶດ ຫຼື ອາຍັດ ທຶນດັ່ງກ່າວ ຈະຕົກໄປ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງໄປຫາຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອຊາບ ແລະ ຍົກເລີກການນຳໃຊ້ມາດຕະການທາງບໍລິຫານ ພ້ອມທັງສົ່ງທຶນດັ່ງກ່າວຄືນ ທັນທີທັນໃດ.

**ມາດຕາ 10 ການລາຍງານການເຄື່ອນໄຫວ ຂອງຜູ້ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກພົບເຫັນທຸກການເຄື່ອນໄຫວຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ຫຼື ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສາມາດຢຸດຕິການເຄື່ອນໄຫວດັ່ງກ່າວ ພ້ອມທັງລາຍງານ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫຼື ຂະແໜງການປ້ອງກັນຄວາມສະຫງົບ ແລະ ສຕຝງ ທັນທີທັນໃດ ເພື່ອດຳເນີນການແກ້ໄຂ ແລະ ນຳໃຊ້ມາດຕະການທາງບໍລິຫານຕໍ່ການເຄື່ອນໄຫວດັ່ງກ່າວ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫາກສົງໄສ ຕໍ່ການເຄື່ອນໄຫວທຸລະກຳ ຫຼື ການບໍລິການ ຫຼື ລູກຄ້າ ທີ່ຢູ່ໃນບັນຊີລາຍຊື່ ຫຼື ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງລາຍງານໄປຫາ ສຕຝງ ທັນທີທັນໃດ, ສຳລັບວິສາຫະກິດໄປສະນີ ໃຫ້ລາຍງານໄປຫາ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ ທັນທີທັນໃດ.

**ມາດຕາ 11 ການກວດສອບຂໍ້ມູນທີ່ໃກ້ຄຽງ ຫຼື ຄ້າຍຄືກັນ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ຕ້ອງໄດ້ກວດສອບຂໍ້ມູນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໃກ້ຄຽງ ຫຼື ຄ້າຍຄືກັນ ກັບຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ຊື່, ນາມສະກຸນ, ວັນ, ເດືອນ, ປີເກີດ ແລະ ເອກະສານຢັ້ງຢືນຕົວຕົນອື່ນ ຢ່າງເປັນປະຈຳ ແລະ ຕໍ່ເນື່ອງ ເພື່ອກວດສອບວ່າ ບຸກຄົນດັ່ງກ່າວ ບໍ່ມີພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ເປັນການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ກົມ, ກະຊວງ ຫ້ອງການ ຫຼື ໜ່ວຍງານ ທີ່ຖືກມອບໝາຍ. ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ບໍ່ສາມາດກວດສອບຂໍ້ມູນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໃກ້ຄຽງ ຫຼື ຄ້າຍຄືກັນໄດ້ ຕ້ອງສະເໜີໄປຫາກະຊວງປ້ອງກັນຄວາມສະຫງົບ ແລະ ສຕພງ ທັນທີທັນໃດ ເພື່ອຢັ້ງຢືນຄວາມຖືກຕ້ອງ ກ່ຽວກັບຂໍ້ມູນດັ່ງກ່າວ.

ພາຍຫຼັງກວດສອບຂໍ້ມູນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ແລ້ວ ຫາກເຫັນວ່າ ເປັນຜູ້ທີ່ມີລາຍຊື່ທີ່ໃກ້ຄຽງ ຫຼື ຄ້າຍຄືກັນ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນອື່ນ ຕ້ອງຍົກເລີກ ການ ລະງັບ, ກັກ ທຶນ ທັນທີທັນໃດ.

## ໝວດທີ 3
## ການແກ້ໄຂຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ

### ມາດຕາ 12 ການແກ້ໄຂຜົນກະທົບຈາກ ການ ຍຶດ ຫຼື ອາຍັດ ທຶນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຖືກກຳນົດເຂົ້າ ໃນບັນຊີລາຍຊື່ ຫຼື ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໄດ້ຮັບຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ມີສິດສະເໜີ ຫຼື ຮ້ອງຂໍ ໄປຫາກະຊວງປ້ອງກັນຄວາມສະຫງົບ ເພື່ອພິຈາລະນາແກ້ໄຂ.

ການແກ້ໄຂຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ຕາມບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໃຫ້ປະຕິບັດ ດັ່ງນີ້:

1. ສົ່ງຄືນໃຫ້ຜູ້ເປັນເຈົ້າຂອງ ທີ່ຄຸ້ມຄອງຢ່າງຖືກຕ້ອງຕາມກົດໝາຍ ຖ້າຫາກທຶນນັ້ນ ຖືກຜູ້ອື່ນ ຄວບຄຸມ, ນຳໃຊ້ ຫຼື ຈະນຳໃຊ້ ເຂົ້າໃນການເຄື່ອນໄຫວການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ອະນຸຍາດໃຫ້ນຳໃຊ້ ເປັນຄ່າໃຊ້ຈ່າຍທີ່ຈຳເປັນ ຕາມຍັດຕິ 1267 (ປີ 1999) ແລະ 1452 (ປີ 2002) ດັ່ງນີ້:

   2.1. ຄ່າໃຊ້ຈ່າຍພື້ນຖານ ເຊັ່ນ ຄ່າໃຊ້ຈ່າຍທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ ເປັນຕົ້ນ ຄ່າອາຫານ, ຄ່າເຊົ່າທີ່ຢູ່ອາໄສ ຫຼື ຄ່າຜ່ອນເຮືອນ, ຄ່າຢາປົວພະຍາດ ແລະ ຄ່າປິ່ນປົວ, ຄ່າພາສີ, ຄ່າປະກັນໄພ, ຄ່າບໍລິການສາທາລະນຸປະໂພກ, ຄ່າໃຊ້ຈ່າຍສຳລັບການສຶກສາ;

   2.2. ຄ່າໃຊ້ຈ່າຍພິເສດ ທີ່ບໍ່ແມ່ນຄ່າໃຊ້ຈ່າຍພື້ນຖານ ແຕ່ມີຄວາມຈຳເປັນໃນການໃຊ້ບໍລິການດ້ານວິຊາຊີບ ເປັນຕົ້ນ ຄ່າຈ້າງທະນາຍຄວາມ, ຄ່າປິ່ນປົວສຸກເສີນ, ຄ່າໃຊ້ຈ່າຍທີ່ຈຳເປັນສຳລັບການດຳເນີນທຸລະກິດທີ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;

   2.3. ຊຳລະໜີ້ສິນ ຫຼື ພັນທະຕ່າງໆ ທີ່ເກີດຂຶ້ນກ່ອນຍັດຕິ ຖືກຮັບຮອງ ໂດຍມີເງື່ອນໄຂວ່າ ການຊຳລະນັ້ນບໍ່ແມ່ນເພື່ອຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກກຳນົດໃນບັນຊີລາຍຊື່.

3. ອະນຸຍາດໃຫ້ໄດ້ຮັບ ດອກເບ້ຍ ຫຼື ລາຍຮັບອື່ນ ທີ່ເກີດຈາກ ສັນຍາ, ຂໍ້ຕົກລົງ ຫຼື ພັນທະອື່ນ ທີ່ເກີດຂຶ້ນກ່ອນບັນຊີ ຖືກອາຍັດ ໂດຍຜ່ານບັນຊີເງິນຝາກດັ່ງກ່າວ ຊຶ່ງບັນຊີເງິນຝາກນັ້ນ ຍັງຕ້ອງຖືກອາຍັດຕໍ່ໄປ.

ການພິຈາລະນາແກ້ໄຂກ່ຽວກັບທຶນທີ່ຖືກ ຍຶດ ຫຼື ອາຍັດ ຕາມບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ກະຊວງປ້ອງກັນຄວາມສະຫງົບ ຕ້ອງປະສານໄປຫາກະຊວງການຕ່າງປະເທດ ເພື່ອຂໍອະນຸມັດການນຳໃຊ້ທຶນ ຈາກຄະນະກຳມະການກ່ຽວຂ້ອງ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ພ້ອມທັງສະໜອງທຸກເອກະສານທີ່ຈຳເປັນ ໃຫ້ຄະນະກຳມະການດັ່ງກ່າວ.

ການແກ້ໄຂຜົນກະທົບຈາກການ ຍຶດ ຫຼື ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ພາຍໃນປະເທດ ໃຫ້ປະຕິບັດ ດັ່ງນີ້:

1. ສົ່ງຄືນໃຫ້ຜູ້ເປັນເຈົ້າຂອງ ທີ່ຄຸ້ມຄອງຢ່າງຖືກຕ້ອງຕາມກົດໝາຍ ຖ້າຫາກທຶນນັ້ນ ຖືກບຸກຄົນອື່ນຄວບຄຸມ, ນຳໃຊ້ ຫຼື ຈະນຳໃຊ້ ເຂົ້າໃນການເຄື່ອນໄຫວກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ອະນຸຍາດໃຫ້ນຳໃຊ້ ເປັນຄ່າໃຊ້ຈ່າຍທີ່ຈຳເປັນ ຕາມຍັດຕິ 1373 (ປີ 2001) ແລະ 1452 (ປີ 2002) ດັ່ງນີ້:

2.1 ຄ່າໃຊ້ຈ່າຍພື້ນຖານ ເຊັ່ນ ຄ່າໃຊ້ຈ່າຍທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ ເປັນຕົ້ນ ຄ່າອາຫານ, ຄ່າເຊົ່າທີ່ຢູ່ອາໄສ ຫຼື ຄ່າຜ່ອນເຮືອນ, ຄ່າຢາປົວພະຍາດ ແລະ ຄ່າປິ່ນປົວ, ຄ່າພາສີ, ຄ່າປະກັນໄພ, ຄ່າບໍລິການສາທາລະນຸປະໂພກ, ຄ່າໃຊ້ຈ່າຍສຳລັບການສຶກສາ;

2.2 ຄ່າໃຊ້ຈ່າຍພິເສດ ທີ່ບໍ່ແມ່ນຄ່າໃຊ້ຈ່າຍພື້ນຖານ ແຕ່ມີຄວາມຈຳເປັນໃນການໃຊ້ບໍລິການດ້ານວິຊາຊີບ ເປັນຕົ້ນ ຄ່າຈ້າງທະນາຍຄວາມ, ຄ່າປິ່ນປົວສຸກເສີນ, ຄ່າໃຊ້ຈ່າຍທີ່ຈຳເປັນສຳລັບການດຳເນີນທຸລະກິດທີ່ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ;

2.3 ຄ່າໃຊ້ຈ່າຍການປະຕິບັດພັນທະທາງດ້ານກົດໝາຍອື່ນ ຂອງຜູ້ທີ່ຖືກ ຍຶດ ຫຼື ອາຍັດ ທຶນ;

2.4 ຊຳລະໜີ້ສິນ ຫຼື ພັນທະຕ່າງໆ ທີ່ເກີດຂຶ້ນກ່ອນຍັດຕິ ຖືກຮັບຮອງ ໂດຍມີເງື່ອນໄຂວ່າ ການຊຳລະນັ້ນບໍ່ແມ່ນເພື່ອຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກກຳນົດໃນບັນຊີລາຍຊື່;

2.5 ຄ່າໃຊ້ຈ່າຍອື່ນ ຕາມກົດໝາຍ.

3. ອະນຸຍາດໃຫ້ໄດ້ຮັບດອກເບ້ຍ ຫຼື ລາຍຮັບອື່ນ ທີ່ເກີດຈາກ ສັນຍາ, ຂໍ້ຕົກລົງ ຫຼື ພັນທະອື່ນ ທີ່ເກີດຂຶ້ນກ່ອນບັນຊີຖືກອາຍັດ ໂດຍຜ່ານບັນຊີເງິນຝາກດັ່ງກ່າວ ຊຶ່ງບັນຊີເງິນຝາກນັ້ນ ຍັງຕ້ອງຖືກອາຍັດຕໍ່ໄປ.

ການພິຈາລະນາແກ້ໄຂກ່ຽວກັບ ທຶນ ທີ່ຖືກ ຍຶດ ຫຼື ອາຍັດ ຕາມບັນຊີລາຍຊື່ພາຍໃນປະເທດ ກະຊວງປ້ອງກັນຄວາມສະຫງົບ ຕ້ອງກຳນົດມາດຕະການທີ່ຈຳເປັນ ເພື່ອປ້ອງກັນບໍ່ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ນຳເອົາທຶນ ໄປເຄື່ອນໄຫວກ່ຽວກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 13 ທຶນ ທີ່ຖືກ ຍຶດ ຫຼື ອາຍັດ ທີ່ເຈົ້າຂອງບໍ່ມາສະແດງເຈດຈຳນົງ**

ທຶນ ທີ່ຖືກ ຍຶດ ແລະ ອາຍັດ ທີ່ຜູ້ເປັນເຈົ້າຂອງ ຫຼື ຜູ້ຮັບຜົນປະໂຫຍດ ບໍ່ມາສະແດງເຈດຈຳນົງຕໍ່ການຍຶດ ຫຼື ອາຍັດ ທຶນດັ່ງກ່າວ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນ ແລະ ພິຈາລະນາ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

## ໝວດທີ 4
## ການສະເໜີ ເພີ່ມຊື່ເຂົ້າໃນ ແລະ ຖອນຊື່ອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ

**ມາດຕາ 14 ການຄົ້ນຄວ້າສະເໜີ ເພີ່ມຊື່ເຂົ້າໃນ ຫຼື ຖອນຊື່ອອກຈາກ ບັນຊີລາຍຊື່**

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄົ້ນຄວ້າ ຂໍ້ມູນ ຫຼັກຖານ ກ່ຽວກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກສະເໜີ ເພີ່ມຊື່ເຂົ້າໃນ ຫຼື ຖອນຊື່ອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໂດຍປະສານສົມທົບກັບ ກະຊວງການຕ່າງປະເທດ, ສຕຟງ, ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ໂດຍອີງໃສ່ຂໍ້ມູນພື້ນຖານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ວັກໜຶ່ງ ຂໍ້ 1 ຂອງດຳລັດສະບັບນີ້ ແລະ ເງື່ອນໄຂການກຳນົດລາຍຊື່ ຕາມທີ່ໄດ້ກຳນົດໄວ້ໃນຍັດຕິສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

ພາຍຫຼັງການພິຈາລະນາແລ້ວ ເຫັນວ່າ ມີຂໍ້ມູນ ຫຼັກຖານໜັກແໜ້ນ ແລະ ພຽງພໍ ທີ່ສາມາດຢັ້ງຢືນໄດ້ວ່າ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ດັ່ງກ່າວ ມີ ຫຼື ບໍ່ມີ ພຶດຕິກຳ ຫຼື ການເຄື່ອນໄຫວທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກະຊວງປ້ອງກັນຄວາມສະຫງົບ ຕ້ອງສະເໜີກະຊວງການຕ່າງປະເທດ ເພື່ອສະເໜີຕໍ່ ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ພິຈາລະນາ.

**ມາດຕາ 15 ການສະເໜີໄປຫາສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ**

ກະຊວງການຕ່າງປະເທດສະເໜີ ຖອນຊື່ອອກຈາກບັນຊີລາຍຊື່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ບໍ່ມີ ພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່

ການຮ້າຍ ໄປຫາສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຕາມແບບພິມ ທີ່ອົງການດັ່ງກ່າວກຳນົດ ໂດຍຜ່ານຈຸດປະສານງານ ທີ່ຮັບຜິດຊອບໃນການຖອນລາຍຊື່ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

ນອກຈາກນີ້ ກະຊວງປ້ອງກັນຄວາມສະຫງົບ ຍັງຕ້ອງແຈ້ງ ສິດ ແລະ ລາຍລະອຽດ ໃນການຮ້ອງຂໍຖອນລາຍຊື່ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ແລະ ຈຸດປະສານງານ ທີ່ຮັບຜິດຊອບໃນການຖອນລາຍຊື່ ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ.

**ມາດຕາ 16 ການນຳສົ່ງບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງອົງການສະຫະປະຊາຊາດ**

ພາຍຫຼັງ ກະຊວງການຕ່າງປະເທດ ໄດ້ຮັບບັນຊີລາຍຊື່ຈາກສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ບໍ່ຈຳເປັນຕ້ອງ ຄົ້ນຄວ້າ, ພິຈາລະນາ ແລະ ຕ້ອງນຳສົ່ງບັນຊີລາຍຊື່ດັ່ງກ່າວໄປຫາ ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສຕຟງ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສຕຟງ ຕ້ອງແຈ້ງບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອລະງັບ ທຸລະກຳ ຫຼື ການໃຫ້ບໍລິການ ແລະ ກັກທຶນ ພ້ອມທັງສະເໜີຕໍ່ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ທີ່ພົວພັນກັບ ຜູ້ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ບໍ່ເກີນ ຊາວສີ່ ຊົ່ວໂມງ ພາຍຫຼັງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຮັບຮອງ ຫຼື ປັບປຸງ ບັນຊີລາຍຊື່ ແລະ ເຜີຍແຜ່ບັນຊີລາຍຊື່ດັ່ງກ່າວ ຜ່ານເວັບໄຊສ໌ຂອງລັດຖະບານ ຫຼື ເວັບໄຊສ໌ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສຕຟງ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ສາມາດຕິດຕາມ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຜ່ານລະບົບເອເລັກໂຕຣນິກ ແລະ ຜ່ານຊ່ອງທາງອື່ນ.

## ໝວດທີ 5
## ການ ກຳນົດຊື່ເຂົ້າໃນ ແລະ ຖອນຊື່ອອກຈາກ ບັນຊີລາຍຊື່ພາຍໃນປະເທດ

**ມາດຕາ 17 ການສະເໜີກຳນົດຊື່ເຂົ້າໃນບັນຊີລາຍຊື່ພາຍໃນປະເທດ**

ການສະເໜີກຳນົດຊື່ເຂົ້າໃນບັນຊີລາຍຊື່ພາຍໃນປະເທດ ມີພື້ນຖານ ດັ່ງນີ້:

1. ພົນຈາກການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງ;
2. ການເຄື່ອນໄຫວວິຊາສະເພາະຂອງ ສຕຟງ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ;
3. ມີການສະເໜີຂອງລັດຕ່າງປະເທດ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຄົ້ນຄວ້າ ຂໍ້ມູນຫຼັກຖານ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກສະເໜີກຳນົດຊື່ເຂົ້າໃນບັນຊີລາຍຊື່ພາຍໃນປະເທດ ໂດຍປະສານສົມທົບກັບ ກະຊວງການຕ່າງປະເທດ, ສຕຟງ, ກະຊວງ ແລະ ອົງການ ທີ່ກ່ຽວຂ້ອງ ແລ້ວສະເໜີ ຄຕຟງ ພິຈາລະນາ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກສະເໜີກຳນົດຊື່ເຂົ້າໃນບັນຊີລາຍຊື່ພາຍໃນປະເທດ ຫາກມີຂໍ້ມູນຫຼັກຖານຢັ້ງຢືນ ວ່າຕົນບໍ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສາມາດສະເໜີຕໍ່ ອົງການ ທີ່ມີສິດ ແລະ ໜ້າທີ່ ທີ່ກ່ຽວຂ້ອງ ພິຈາລະນາຄືນຕາມກົດໝາຍ.

**ມາດຕາ 18 ການພິຈາລະນາກຳນົດບັນຊີລາຍຊື່ພາຍໃນປະເທດ**

ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາການສະເໜີກຳນົດບັນຊີລາຍຊື່ພາຍໃນປະເທດ ໂດຍອີງໃສ່ ຂໍ້ມູນພື້ນຖານໃດໜຶ່ງ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຫາກມີຂໍ້ມູນຫຼັກຖານ ທີ່ໜັກແໜ້ນ ແລະ ພຽງພໍ ສາມາດພິສູດ ຫຼື ຢັ້ງຢືນໄດ້ ວ່າ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ມີຈຸດປະສົງ ໃຫ້ການຊ່ວຍເຫຼືອ, ສະໜັບສະໜູນ, ສະໜອງທຶນ, ວັດຖຸອຸປະກອນ ຫຼື ເຕັກໂນໂລຊີ, ສິນຄ້າ ຫຼື ການບໍລິການ ຫຼື ມີພຶດຕິກຳ ຫຼື ການເຄື່ອນໄຫວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ລັດຕ່າງປະເທດຮ້ອງຂໍໃຫ້ກຳນົດເຂົ້າໃນບັນຊີລາຍຊື່ພາຍໃນປະເທດ ໂດຍລັດທີ່ຮ້ອງຂໍ ມີຂໍ້ມູນ ຫຼັກຖານ ທີ່ໜັກແໜ້ນ ແລະ ພຽງພໍ ທີ່ສາມາດຢັ້ງຢືນໄດ້ວ່າ ບຸກຄົນດັ່ງກ່າວ ມີພຶດຕິກຳ ຫຼື ການເຄື່ອນໄຫວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ພາຍຫຼັງ ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາແລ້ວ ເຫັນວ່າ ມີຫຼັກຖານ ໜັກແໜ້ນ ແລະ ພຽງພໍ ທີ່ສາມາດຢັ້ງຢືນໄດ້ວ່າ ພຶດຕິກຳ ຫຼື ການກະທຳ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ມີຂໍ້ມູນພື້ນຖານໃດໜຶ່ງ ຕາມທີ່ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ຕ້ອງສະເໜີຕໍ່ ຄຕຟງ ພິຈາລະນາກຳນົດເຂົ້າໃນບັນຊີລາຍຊື່ພາຍໃນປະເທດ ຫຼື ຮ້ອງຂໍໄປຍັງລັດຕ່າງປະເທດ ທັນທີທັນໃດ ຜ່ານກະຊວງການຕ່າງປະເທດ ໂດຍບໍ່ຈຳເປັນຜ່ານຂັ້ນຕອນການດຳເນີນຄະດີອາຍາ ຫຼື ມີຄຳຕັດສິນຂອງສານ ແລະ ບໍ່ຈຳເປັນມີການກະທຳຜິດເກີດຂຶ້ນ.

ກະຊວງປ້ອງກັນຄວາມສະຫງົບ ຕ້ອງແຈ້ງ ສິດ, ພັນທະ ແລະ ລາຍລະອຽດການຮ້ອງຂໍ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກກຳນົດໃນບັນຊີລາຍຊື່ພາຍໃນປະເທດ ພາຍຫຼັງ ຄຕຟງ ກຳນົດຊື່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ດັ່ງກ່າວ ເຂົ້າໃນບັນຊີລາຍຊື່ພາຍໃນປະເທດ ຫຼື ພາຍຫຼັງມີການຮ້ອງຂໍໄປຫາລັດຕ່າງປະເທດແລ້ວ.

ສຳລັບລາຍລະອຽດກ່ຽວກັບ ການກຳນົດບັນຊີລາຍຊື່ພາຍໃນປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 19 ການຮ້ອງຂໍຂອງ ສປປ ລາວ ໄປຫາລັດຕ່າງປະເທດ**

ພາຍຫຼັງ ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາແລ້ວ ຖ້າເຫັນວ່າ ມີຂໍ້ມູນ ຫຼັກຖານ ໜັກແໜ້ນ ແລະ ພຽງພໍ ທີ່ຢັ້ງຢືນໄດ້ວ່າ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ມີພຶດຕິກຳ ຫຼື ການເຄື່ອນໄຫວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ກະຊວງປ້ອງກັນຄວາມສະຫງົບ ຕ້ອງສະເໜີຫາກະຊວງການຕ່າງປະເທດ ເພື່ອສົ່ງຄຳຮ້ອງຂໍຂອງ ສປປ ລາວ ໄປຫາລັດຕ່າງປະເທດ ພິຈາລະນາກຳນົດຊື່ ເຂົ້າໃນບັນຊີລາຍຊື່ຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງລັດດັ່ງກ່າວ.

ໃນກໍລະນີ ມີການປ່ຽນແປງຂໍ້ມູນຂອງຜູ້ຢູ່ໃນບັນຊີລາຍຊື່ພາຍໃນປະເທດ ຫາກທີ່ພົວພັນກັບ ບັນຊີລາຍຊື່ຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງລັດຕ່າງປະເທດ ກະຊວງປ້ອງກັນຄວາມສະຫງົບຕ້ອງແຈ້ງການປ່ຽນແປງຂໍ້ມູນດັ່ງກ່າວ ໄປຫາລັດຕ່າງປະເທດທີ່ກ່ຽວຂ້ອງ ຊາບ ທັນທີທັນໃດ.

**ມາດຕາ 20 ການຖອນຊື່ອອກຈາກບັນຊີລາຍຊື່**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ກຸ່ມຄົນ ໃດໜຶ່ງ ຫາກມີຂໍ້ມູນຢັ້ງຢືນໄດ້ວ່າ ຕົນເອງ ບໍ່ມີພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ເປັນການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສາມາດສະເໜີຕໍ່ກະຊວງປ້ອງກັນຄວາມສະຫງົບ ພິຈາລະນາ ຖອນຊື່ຕົນເອງ ອອກຈາກບັນຊີລາຍຊື່ຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ກະຊວງປ້ອງກັນຄວາມສະຫງົບ ຕ້ອງພິຈາລະນາ ຂໍ້ມູນ ຫຼັກຖານ ກ່ຽວກັບການສະເໜີຖອນຊື່ ອອກຈາກບັນຊີລາຍຊື່ ໂດຍປະສານສົມທົບກັບ ກະຊວງການຕ່າງປະເທດ, ສຕຟງ, ກະຊວງ ແລະ ອົງການອື່ນ ທີ່ກ່ຽວຂ້ອງ. ໃນກໍລະນີພິຈາລະນາແລ້ວ ຫາກເຫັນວ່າ ມີຂໍ້ມູນ ຫຼັກຖານ ຢັ້ງຢືນໄດ້ວ່າ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຫຼື ກຸ່ມຄົນ ທີ່ສະເໜີຖອນຊື່ ອອກຈາກບັນຊີລາຍຊື່ນັ້ນ ບໍ່ມີພຶດຕິກຳ ຫຼື ການເຄື່ອນໄຫວ ທີ່ເປັນການກໍ່ການຮ້າຍ

ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ກຳນົດໄວ້ໃນມາດຕາ 18 ວັກໜຶ່ງ ຂອງດຳລັດສະບັບນີ້ ຕ້ອງສະເໜີຕໍ່ ຄຕຟງ ຖອນຊື່ ອອກຈາກບັນຊີລາຍຊື່ພາຍໃນປະເທດ ທັນທີທັນໃດ.

**ມາດຕາ 21 ການແຈ້ງຜົນການຮ້ອງຂໍຂອງລັດຕ່າງປະເທດ**

ກະຊວງປ້ອງກັນຄວາມສະຫງົບ ແຈ້ງຜົນການຮ້ອງຂໍ ໄປຫາລັດຕ່າງປະເທດທີ່ຮ້ອງຂໍ ຊາບ ກ່ຽວກັບການກຳນົດຊື່, ບໍ່ກຳນົດຊື່ ຫຼື ຖອນຊື່ ອອກຈາກບັນຊີລາຍຊື່ພາຍໃນປະເທດ ໂດຍຜ່ານກະຊວງການຕ່າງປະເທດ.

**ມາດຕາ 22 ການນຳສົ່ງບັນຊີລາຍຊື່ພາຍໃນປະເທດ**

ພາຍຫຼັງ ຄຕຟງ ໄດ້ຮັບຮອງເອົາບັນຊີລາຍຊື່ພາຍໃນປະເທດ ກະຊວງປ້ອງກັນຄວາມສະຫງົບ ຕ້ອງນຳສົ່ງບັນຊີລາຍຊື່ດັ່ງກ່າວ ໄປຫາກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສຕຟງ ເພື່ອແຈ້ງໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊາບ ພ້ອມທັງເຜີຍແຜ່ບັນຊີລາຍຊື່ດັ່ງກ່າວ ຜ່ານເວັບໄຊສ໌ຂອງລັດຖະບານ ຫຼື ເວັບໄຊສ໌ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ ທັນທີທັນໃດ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສຕຟງ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ສາມາດຕິດຕາມ ບັນຊີລາຍຊື່ພາຍໃນປະເທດ ຜ່ານລະບົບເອເລັກໂຕຣນິກ ແລະ ຜ່ານຊ່ອງທາງອື່ນ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສຕຟງ ຕ້ອງແຈ້ງ ບັນຊີລາຍຊື່ພາຍໃນປະເທດ ໃຫ້ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ລະງັບ ທຸລະກຳ ຫຼື ການໃຫ້ບໍລິການ ແລະ ກັກທຶນ ພ້ອມທັງສະເໜີຕໍ່ກະຊວງປ້ອງກັນຄວາມສະຫງົບ ອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ບໍ່ເກີນ ຊາວສີ່ ຊົ່ວໂມງ ພາຍຫຼັງ ຄຕຟງ ຮັບຮອງ ຫຼື ປັບປຸງ ບັນຊີລາຍຊື່ພາຍໃນປະເທດ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 23 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ພົວພັນກັບທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
2. ເຄື່ອນໄຫວ ຫຼື ດຳເນີນການ ກ່ຽວກັບທຶນ ໂດຍທີ່ຮູ້ວ່າທຶນນັ້ນ ໃຜເປັນເຈົ້າຂອງ, ຖືກຄວບຄຸມ ຫຼື ໄດ້ຖືກຄອບຄອງ ທັງທາງກົງ ຫຼື ທາງອ້ອມ ທັງໝົດ ຫຼື ບາງສ່ວນ ຫຼື ກະທຳໃນນາມ ຫຼື ຕາມຄຳສັ່ງຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຖືກກຳນົດໃນບັນຊີລາຍຊື່ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
3. ເຮັດໃຫ້ ທຶນ ຫຼື ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປ່ຽນຮູບ, ພ້ອມນຳໃຊ້ ໂດຍທາງກົງ ຫຼື ທາງອ້ອມ, ທັງໝົດ ຫຼື ບາງສ່ວນ;
4. ພົວພັນ ຫຼື ເຂົ້າຮ່ວມ ໃນການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
5. ພົວພັນທຸກຮູບແບບ ຫຼື ໃຫ້ການຊ່ວຍເຫຼືອແກ່ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
6. ພົວພັນກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
7. ໃຫ້, ຮັບ ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

8. ປອມແປງ ເອກະສານ ຫຼື ນໍາໃຊ້ເອກະສານປອມ;

9. ປິດບັງ, ຊຸກເຊື່ອງ, ນາບຂູ່, ກີດໜ່ວງ ຖ່ວງດຶງ ແລະ ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

10. ລາຍງານຂໍ້ມູນທີ່ບໍ່ມີຄວາມຈິງ ກ່ຽວກັບການພົບເຫັນ ຫຼື ມີຄວາມສົງໄສ ຕໍ່ທຸລະກໍາ ຫຼື ການເຄື່ອນໄຫວ ທີ່ກ່ຽວຂ້ອງ ຫຼື ອາດຈະກ່ຽວຂ້ອງ ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

11. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 24 ຂໍ້ຫ້າມ ສໍາລັບ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ຫ້າມ ຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ພົວພັນກັບ ທະນາຄານ ຫຼື ສະຖາບັນການເງິນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ມີຕົວຕົນ;

2. ພົວພັນກັບທະນາຄານ ຢູ່ປະເທດທີ່ບໍ່ມີກົດໝາຍ ຫຼື ລະບຽບການ ກ່ຽວກັບການ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ເຮັດທຸລະກິດ ຫຼື ທຸລະກໍາ ກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ຢູ່ໃນບັນຊີລາຍຊື່ ຫຼື ທີ່ພົວພັນການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ໃຫ້ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 25 ຂໍ້ຫ້າມ ສໍາລັບ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕໍາແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ ຈາກວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ບໍ່ມີສ່ວນກ່ຽວຂ້ອງ;

3. ສົມຮູ້ຮ່ວມຄິດ ກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ໃຫ້, ຮັບ ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ເມີນເສີຍຕໍ່ໜ້າທີ່ຮັບຜິດຊອບຂອງຕົນ ຫຼື ກີດໜ່ວງ ຖ່ວງດຶງເອກະສານ;

6. ມີພຶດຕິກໍາອື່ນ ທີ່ເປັນການເມີດກົດໝາຍ.

## ໝວດທີ 7

## ການ ຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ມາດຕາ 26 ອົງການຄຸ້ມຄອງ ແລະ ກວດກາ**

ຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຜູ້ ຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ເປັນເຈົ້າການ ປະສານສົມທົບກັບ ກະຊວງປ້ອງກັນຄວາມ

ສະຫງົບ, ກະຊວງການຕ່າງປະເທດ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທະນາຄານແຫ່ງ ສປປ ລາວ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 27 ສິດ ແລະ ໜ້າທີ່ ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຄຕຟງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ ແລະ ລະບຽບການ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອສະເໜີ ລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ຮັບຮອງແຜນການດຳເນີນງານກ່ຽວກັບການ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

5. ຮັບຮອງການ ກຳນົດຊື່ເຂົ້າໃນ ແລະ ຖອນຊື່ອອກຈາກ ບັນຊີລາຍຊື່ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພາຍໃນປະເທດ;

6. ຊີ້ນຳ, ຊຸກຍູ້, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານ ກັກ ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

7. ຊີ້ນຳການບຳລຸງສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

8. ແຕ່ງຕັ້ງຄະນະອະນຸກຳມະການ ເພື່ອການປະສານງານ ແລະ ຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

9. ຊີ້ນຳກ່ຽວກັບການ ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

10. ສະຫຼຸບ ແລະ ລາຍງານວຽກງານຂອງຕົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການໃນການປະສານງານ, ດຳເນີນ ການພິຈາລະນາແກ້ໄຂກ່ຽວກັບ ທຶນ ທີ່ຖືກ ຍຶດ ແລະ ອາຍັດ;

2. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ເກັບກຳ ຫຼື ສັງລວມຂໍ້ມູນ ຫຼັກຖານ ທຸກຮູບແບບ ທີ່ໜັກແໜ້ນ, ພຽງພໍ ແລະ ສອດຄ່ອງ ຫຼື ຄົບອົງປະກອບ ຕາມເງື່ອນໄຂການກຳນົດບັນຊີລາຍຊື່ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ຄຸ້ມຄອງ, ຕິດຕາມ ກວດກາ ທຶນ ທີ່ຖືກ ຍຶດ ແລະ ອາຍັດ;

5. ນຳສົ່ງບັນຊີລາຍຊື່ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄປຍັງດ່ານເຂົ້າ-ອອກ ສປປ ລາວ;

6. ນຳສົ່ງບັນຊີລາຍຊື່ພາຍໃນປະເທດ ໄປຫາກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສຕຝງ;

7. ອອກຄຳສັ່ງ ຍຶດ ຫຼື ອາຍັດ ທຶນ ທັນທີທັນໃດ ຕາມການລາຍງານຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ວິສາຫະກິດໄປສະນີ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ກຳລັງນຳໃຊ້ມາດທາງບໍລິຫານ;

8. ສະເໜີ ຄຕຝງ ພິຈາລະນາ ກຳນົດຊື່ ຫຼື ຖອນຊື່ອອກຈາກ ບັນຊີລາຍຊື່ພາຍໃນປະເທດ;

9. ແຈ້ງເປັນລາຍລັກອັກສອນ ໄປຍັງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເພື່ອຊາບ ແລະ ຍົກເລີກ ການນຳໃຊ້ມາດຕະການທາງບໍລິຫານ ກໍລະນີເຫັນວ່າ ທຶນດັ່ງກ່າວ ຫາກບໍ່ ກ່ຽວຂ້ອງ ຫຼື ພົວພັນກັບຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

10. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳສົ່ງບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ໄປຫາກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂລຊີ ແລະ ການສື່ສານ ແລະ ສຕຝງ ທັນທີທັນໃດ;

2. ສະເໜີສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ເພີ່ມຊື່ເຂົ້າໃນ ຫຼື ຖອນຊື່ອອກຈາກ ບັນຊີລາຍຊື່ຂອງສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ;

3. ສົ່ງຄຳຮ້ອງຂໍຂອງ ສປປ ລາວ ໄປຫາລັດຕ່າງປະເທດ ເພື່ອກຳນົດໃນບັນຊີລາຍຊື່ຜູ້ກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງລັດດັ່ງກ່າວ;

4. ສົ່ງບົດລາຍງານ ການຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ແກ່ສະພາຄວາມໝັ້ນຄົງຂອງອົງການສະຫະປະຊາຊາດ ຕາມພັນທະທີ່ໄດ້ກຳນົດໄວ້ໃນຍັດຕິຂອງອົງການດັ່ງກ່າວ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂະແໜງການວິສາຫະກິດໄປສະນີ ແລະ ລາຍງານຂັ້ນເທິງຖັດຕົນ ໃນແຕ່ລະໄລຍະ;

2. ສະໜອງຂໍ້ມູນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ກວດພົບທີ່ອາດມີຄວາມສ່ຽງກ່ຽວກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ແກ່ພາກສ່ວນກ່ຽວຂ້ອງ;

3. ນຳສົ່ງບັນຊີລາຍຊື່ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍດັ່ງກ່າວ ໄປຍັງວິສາຫະກິດໄປສະນີ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຕຟງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ທີ່ຕົນຄຸ້ມຄອງ;

2. ແຈ້ງບັນຊີລາຍຊື່ຜູ້ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄປຫາຫົວໜ່ວຍທີ່ມີໜ້າທີ່ລາຍງານ ທັນທີທັນໃດ;

3. ບຳລຸງ ສ້າງ ແລະ ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;

4. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນານຳໃຊ້ມາດຕະການປັບໃໝຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ, ຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ວິສາຫະກິດໄປສະນີ ທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບ ກັບ ຄຕຟງ ແລະ ສຕຟງ ໃນການຈັດຕັ້ງປະຕິບັດວຽກງານ ກັກ, ຍຶດ ແລະ ອາຍັດ ທຶນຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 33 ເນື້ອໃນກວດກາ**

ການກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີ ເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຜູ້ຢູ່ໃນບັນຊີລາຍຊື່ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 34 ຮູບການການກວດກາ**

ການກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາ ວຽກງານ ກັກ, ຍຶດ ແລະ ອາຍັດ ທຶນ ຂອງຜູ້ຢູ່ໃນບັນຊີລາຍຊື່ ທີ່ພົວພັນກັບ ການກໍ່ການຮ້າຍ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 35 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 36 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫຼື ກຸ່ມຄົນ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 38 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

**ທອງລຸນ ສີສຸລິດ**